ການຫຼຸດຜ່ອນມົນລະພິດ ແລະ
ການປົກປັກຮັກສາສິ່ງແວດລ້ອມ ໃນ
ພາກພື້ນອາຊີຕາເວັນອອກໂດຍຜ່ານ
ການຈັດຕັ້ງປະຕິບັດ

ການຄຸ້ມຄອງອ່າງຮັບນ້ຳ ແບບເຊື່ອມສານ (IRBM)

ໃນປະເທດສະມາຊິກອາຊຽນ

ໂຄງການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານແມ່ນຫຍັງ?

ແມ່ນ້ຳມີບົດບາດສຳຄັນໃນການຫຼໍ່ລ້ຽງຊີວິດ, ຊຸກຍູ້ສິ່ງເສີມຊຸມຊົນ ແລະ ຂັບເຄື່ອນທາງດ້ານເສດຖະກິດ. ໂຄງການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານມີຈຸດປະສົງເພື່ອສ້າງກົນໄກການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານມີປະສິດທິຜົນໃນເຂດອ່າງຮັບນ້ຳບຸລິມະສິດຂອງ 6 ປະເທດສະມາຊິກອາຊຽນ ເພື່ອຫຼຸດຜ່ອນມົນລະພິດ ແລະ ຄວາມຍືນຍົງ ຂອງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເຊັ່ນດຽວກັນກັບການປັບຕົວເຂົ້າກັບການປ່ຽນແປງ ຂອງດິນຟ້າອາກາດ.

ທ່ີຕ້ັງຂອງໂຄງການການຄຸ້ມຄອງອ່າງຮັບນ້ຳແບບເຊ່ືອມສານ

This graphic is not drawn to scale and is provided for illustration purposes only.

ເປ້ົາໝາຍ

ເພ່ືອສ້າງລະບົບການຄຸ້ມຄອງອ່າງຮັບນ້ຳໃຫ້ມີປະສິດທິພາບ ຊ່ຶງຈະຊ່ວຍເຮັດໃຫ້ແມ່ນ້ຳມີຄຸນນະພາບດີ, ຫຼຸດຜ່ອນ ມົນລະພິດ ແລະ ຮັບປະກັນປະລິມານການໄຫຼຂອງນ້ຳໃຫ້ພຽງພໍແກ່ມະນຸດ, ທຳມະຊາດ ແລະ ການດຳລົງຊີວິດ ຂອງປະຊາຊົນ

ພາລະກິດ

ພວກເຮົາກຳລັງເຮັດວຽກກ່ຽວກັບ ການຄຸ້ມຄອງ ອ່າງຮັບນ້ຳດ້ວຍ:

ການຫຼຸດຜ່ອນມົນລະພິດ ຈາກ ການເຮັດ ກະສິກຳ, ໂຮງ ຈັກໂຮງງານ ແລະ ກິດ ຈະ ກຳທ່ີດິນອ່ືນໆ

ປົກປັກຮັກສາ ແລະ ປ້ອງກັນ ປະລິມານການໄຫຼຂອງນ້ຳ ໃຫ້ແກ່ຊຸມຊົນ ແລະ ລະບົບ ນິເວດ

ຊ່ວຍໃຫ້ຊຸມຊົນປັບຕົວ ເຂ້ົາ ກັບການປ່ຽນແປງ ດິນ ຟ້າອາກາດໂດຍພ້ືນ ຖານ ການອາງແຜນ ແລະ ການປະຕິບັດທ່ີດີຂ້ຶນ

ໂຄງການການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານເຮັດວຽກແນວໃດ?

ພວກເຮົາເຮັດວຽກໃນສີ່ໜ້າວຽກຫຼັກເພື່ອໃຫ້ບັນລຸເປົ້າໝາຍ:

ຄວາມເຂົ້າໃຈກ່ຽວກັບແມ່ນ້ຳ

ພວກເຮົາກຳລັງດຳເນີນການປະເມີນຢ່າງລະອຽດ ເພື່ອເຂົ້າໃຈສະພາບປະຈຸບັນຂອງແມ່ນ້ຳ ແລະ ສິ່ງທ້າທາຍ.

ຜົນໄດ້ຮັບມີຫຍັງແດ່?

ບົດລາຍງານສະພາບອ່າງຮັບນ້ຳທີ່ເປັນແນວທາງໃນການປະຕິບັດແລະ ການຕັດສິນໃຈເພື່ອການວາງແຜນຄຸ້ມຄອງອ່າງຮັບນ້ຳ.

ການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງແມ່ນ້ຳ

ພວກເຮົາໄດ້ນຳເອົານະໂຍບາຍ ແລະ ໂຄງການຕົວແບບ ເພື່ອປັບປຸງການປົກຄອງ ແລະ ການຄຸ້ມຄອງນ້ຳ.

ລວມມີຫຍັງແດ່?

- **ໂຄງການຕົວແບບ:** ການທົດລອງແນວທາງການແກ້ໄຂທາງການຈັດຕັ້ງປະຕິບັດເພື່ອການຄຸ້ມຄອງນ້ຳ ທີ່ດີຂຶ້ນ ລວມທັງການສຶກສາຄວາມເປັນໄປໄດ້, ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການວາງແຜນທາງດ້ານການເງິນ.
- **ນະໂຍບາຍ ແລະ ເຄື່ອງມືທີ່ດີຂຶ້ນ:** ການສ້າງຍຸດທະສາດ ແລະ ແຜນດຳເນີນງານປະຕິບັດງານ ໂດຍອີງໃສ່ ການຈັດຕັ້ງປະຕິບັດທີ່ດີ, ການປັບປຸງກົດໝາຍ ແລະ ການຮ່ວມມືທີ່ຮັດກຸມກ່ວາເກົ່າ.

ການສ້າງຄວາມຮູ້ ແລະ ທັກສະ

ພວກເຮົາກະກຽມຄວາມຮູ້ ແລະ ເຄື່ອງມືທີ່ຈຳເປັນໃຫ້ກັບຊຸມຊົນ, ຜູ້ມີອຳນາດໃນການຕັດສິນໃຈ ແລະ ຜູ້ຊ່ຽວຊານໃນການປົກປັກຮັກສາແມ່ນ້ຳ.

ຂໍ້ສະເໜີ

- ການຝຶກອົບຮົມກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳຢ່າງມີປະສິດທິພາບ
- ເຄື່ອງມື ແລະ ຂະບວນການໃນການຕິດຕາມຄຸນນະພາບນ້ຳ
- ໂຄງຮ່າງໃນການແລກປ່ຽນຄວາມຮູ້ ແລະ ແນວຄວາມຄິດ
- ໂອກາດໃນການເຊື່ອມຕໍ່ຜ່ານເວທີປະຊຸມປຶກສາຫາລື, ການແລກປ່ຽນ ແລະ ສ້າງເຄືອຂ່າຍ.

ການອັດແທກຜົນສຳເລັດ

ພວກເຮົາໄດ້ຕິດຕາມຄວາມຄືບໜ້າເປັນປະຈຳເພື່ອຮັບປະກັນວ່າຜົນການຈັດຕັ້ງປະຕິບັດມີຄວາມໝາຍ ແລະ ຄວາມຍືນຍົງ.

ພວກເຮົາເຮັດແນວໃດ?

- ທົບທວນປະຈຳປີເພື່ອປະເມີນຄວາມຄືບໜ້າ
- ການປະເມີນ ໃນຊ່ວງກາງ ແລະ ໄລຍະສິ້ນສຸດໂຄງການ
- ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດໂຄງການທີ່ດີ, ບົດຮຽນທີ່ຖອດຖອນໄດ້ ແລະ ການ ຂະຫຍາຍພື້ນທີ່ຂອງໂຄງການ.

ດ້ວຍເຫດໃດເລື່ອງນີ້ຈຶ່ງສຳຄັນ?

ແມ່ນ້ຳທີ່ອຸດົມສົມບູນເປັນພື້ນຖານຂອງຊຸມຊົນທີ່ຮຸ່ງເຮືອງສີວິໄລ, ມີລະບົບນິເວດທີ່ຫົນຫານ ແລະ ສ້າງເສດຖະກິດທີ່ຍືນຍົງ. ຜ່ານໂຄງການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານຂອງບັນດາປະເທດສະມາຊິກອາຊຽນໄປພ້ອມກັບການປົກປັກຮັກສາແຫຼ່ງຊັບພະຍາກອນທີ່ສຳຄັນ, ຮັບປະກັນໃຫ້ຄົນລຸ້ນຫຼັງມີອະນາຄົດທີ່ດີຂຶ້ນກວ່າເກົ່າ.

ຂໍ້ມູນໂຄງການ

ທຶນສະໜັບສະໜຸນຈາກ: ກອງທຶນ
ປົກປັກຮັກສາສິ່ງແວດລ້ອມໂລກ (GEF)

8,479,123 ໂດລາສະຫະລັດ

ໂຄງການເລີ່ມຕົ້ນ: **ມັງກອນ 2023**
ໂຄງການສິ້ນສຸດ: **ທັນວາ 2027**

ອົງການຈັດຕັ້ງປະຕິບັດໂຄງການ: **ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP)**

ອົງການບໍລິຫານໂຄງການ: **ອົງການຄູ່ຮ່ວມງານດ້ານການຄຸ້ມຄອງສິ່ງແວດລ້ອມໃນຂົງເຂດທະເລອາຊີ ຕາເວັນອອກ (PEMSEA)**

ຄູ່ຮ່ວມງານການຈັດຕັ້ງປະຕິບັດແຫ່ງຊາດ

ກະຊວງສິ່ງແວດລ້ອມ, ກຳປູເຈຍ

ກະຊວງສິ່ງແວດລ້ອມ, ອິນໂດເນເຊຍ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສປປ ລາວ

ກະຊວງປະຕິຮູບພະລັງງານ ແລະ ນ້ຳ, ມາເລເຊຍ

ກະຊວງສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ, ຟີລິບປິນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫວຽດນາມ

ຮຽນຮູ້ເພີ່ມເຕີມ
ກ່ຽວກັບໂຄງການ
ຄຸ້ມຄອງອ່າງຮັບນ້ຳ
ແບບເຊື່ອມສານ!

(+63) 2 892 92992

info@pemsea.org

PEMSEA Building, DENR Compound,
Visayas Avenue, Quezon City 1165,
Philippines

PEMSEA pemsea pemsea.rf

www.pemsea.org